# ການບໍລິຫານວຽກງານວິຊາການກຸ່ມໂຮງຮຽນປະຖົມສຶກສາ ແຂວງສາລະວັນ

*ລັດດາພອນ ໄຊໂກສີ[1], ບວນເພັດ ຄໍາພູວົງ[2], ສອນເພັດ ສີສຸລາດ[3], ສົມພຽນພະຫາພົມ[4]*
*ສາຂາ ວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈໍາປາສັກ*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ແມ່ນການສຶກສາກ່ຽວກັບການບໍລິຫານວິຊາການກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະ ວັນ. ເຊິ່ງມີຈຸດປະສົງ: 1) ເພື່ອສຶກສາສະພາບການບໍລິຫານວຽກງານວິຊາການ ໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນ. 2) ເພື່ອປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການບໍລິຫານວຽກງານວິຊາ ການໃນກຸ່ມໂຮງຮຽນປະຖົມສຶກສາ ໂດຍຈໍາແນກຕາມເພດ ແລະ ວຸດທິການສຶກສາ. 3) ເພື່ອຊອກຫາແນວທາງ ໃນການປັບປຸງການບໍລິຫານວຽກວິຊາການໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນຜົນການຄົ້ນຄວ້າພົບວ່າ ການບໍລິຫານວິຊາການກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ໂດຍພາບລວມພົບວ່າການບໍລິຫານ ທາງດ້ານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ຈັດຢູ່ໃນລະດັບດີ.

ຜົນການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການບໍລິຫານວຽກງານວິຊາການ ກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນ ຜູ້ບໍລິຫານ ແລະ ຄູສອນທີ່ມີເພດ, ຕໍາແໜ່ງຕ່າງກັນໂດຍພາບລວມ ເຫັນວ່າບໍ່ແຕກຕ່າງກັນ, ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນກ່ຽວກັບການບໍລິ ຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ແລະ ແຕ່ລະດ້ານເຫັນວ່າແຕກຕ່າງກັນ.

ແນວທາງໃນການປັບປຸງການບໍລິຫານວຽກວິຊາການ ໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນດ້ານການບໍລິຫານຫຼັກສູດ: ຕ້ອງມີການປັບປຸງຫຼັກສູດໃຫ້ມີຄວາມເໝາະສົມກັບອາຍຸຂອງນັກຮຽນ, ປັບປຸງເນື້ອໃນບາງວິຊາ, ໂຮງຮຽນຕ້ອງມີການນິເທດຫຼັກສູດກ່ອນການສ້າງໂຄງການສອນ.

ດ້ານການບໍລິຫານດ້ານການຮຽນ -ການສອນ: ຕ້ອງຈັດກິດການຮຽນ-ການສອນໃຫ້ແທດເໝາະກັບນັກຮຽນ, ເໝາະກັບລະດັບຄວາມຮູ້ຄວາມສາມາດ, ອາຍຸ ແລະ ລະດັບສະຕິປັນຍາຂອງນັກຮຽນໂດຍການນໍາໃຊ້ວິທີ ສິດສອນທີ່ຫຼາກຫຼາຍຮູບແບບ.

ການບໍລິຫານສື່ການຮຽນ - ການສອນ: ມີແນວທາງໃນການສົ່ງເສີມໃຫ້ຄູໄດ້ຜະລິດສື່ການຮຽນ - ການສອນການນໍາໃຊ້ສື່ ຫຼື ສະແດງສື່ໃຫ້ເໝາະສົມ ແລະ ມີສ່ວນຮ່ວມຂອງນັກຮຽນໃນການສ້າງສື່ການຮຽນ - ການສອນ ໃຫ້ຫຼາຍ.

ດ້ານການບໍລິຫານດ້ານວັດ - ປະເມີນຜົນການຮຽນ: ມີແນວທາງສົ່ງເສີມໃຫ້ຄູໄດ້ອົບຮົມວິທີການວັດ - ປະ ເມີນຜົນຖືກຕ້ອງ, ໃຫ້ມີການປະເມີນກ່ອນການຮຽນ, ລະຫວ່າງຮຽນ, ຫຼັງການຮຽນ ແລະ ການປະເມີນຕ້ອງມີລະ ດັບຄວາມຍາກ - ງ່າຍຂອງກິດຈະກໍາເພື່ອຊຸກຍູ້ໃຫ້ນັກຮຽນຄົ້ນຄວ້າບົດຮຽນໃຫ້ຫຼາຍຂຶ້ນ.

---

[1] *ພາກວິຊາພາສາລາວ, ວິທະຍາໄລຄູສາລະວັນ ເບີໂທ 020 9739 7599*
[2] *ຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ*
[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ*
[4] *ຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ*

ດ້ານການບໍລິຫານການນິເທດພາຍໃນ: ຕ້ອງມີການສ້າງຄູນິເທດປະຈຳໂຮງຮຽນ ແລະ ຕ້ອງໄດ້ຮັບການເຝິກ ອົບຮົມວິທີການສອນທີ່ຫຼາກຫຼາຍໂຮງຮຽນຕ້ອງມີການຈັດນິເທດໃນໂຮງຮຽນຕົນຢ່າງໜ້ອຍປີລະສອງຄັ້ງ.

**ຄຳສັບສຳຄັນ:** ການບໍລິຫານ, ວຽກງານວິຊາການ

# The Administration of Aacademic Work of Primary School Group in Salavan Province

**Abstract**

This research is a study on the administration of academic work in primary school groups in Salanvan province. It aims: 1) to investigate the state of administration of academic work of primary schools groups in Salavan province; 2) to compare the opinions of administrators and teachers about the administration of academic work of the primary school groups by gender and educational level; and 3) to find a way to improve the administration of academic work of primary schools groups in Salavan province

The research results revealed that:

Overall, it is found that the academic work administration in primary schools in Saravan province is at a good level.

The comparison of the opinions of administrators and teachers about the management of academic work in Sarawan province primary school groups different genders, different positions in general view did not differ. However, the perspective of the administrators and teachers with different educational qualifications was seen to be different.

Guidelines for improving the management of academic work in primary schools groups in Saravan province were associated with the followings:

Curriculum management: There is a need to improve the curriculum to be suitable for the age of the students, improve the content of some subjects, and the school must have a curriculum orientation before creating a teaching program.

Teaching and learning management: It is necessary to organize teaching and learning activities to suit the students, suitable for the level of their knowledge, ability, age and intelligence by using a variety of teaching methods.

Teaching and learning material management: There are ways to encourage teachers to produce teaching and learning materials, using or displaying them appropriately and involving students in creating more teaching and learning materials.

The administrative aspects of teaching - evaluation of learning: There are ways to encourage teachers to use teaching-evaluating methods correctly. The evaluation must be carried out before learning, during learning, and after learning, and the evaluation must have a level of easy-to-difficult activity to encourage students to learn more.

Internal orientation management: There must be a school orientation for teachers. Teacher must be trained in a variety of teaching methods. The school must organize orientation in its school at least twice a year.

**Key word:** Administratoin, Acadamic work

**1. ພາກສະເໜີ**

ລັດຖະບານ ສປປ ລາວໄດ້ຖືເອົາການພັດທະນາການສຶກສາ ແລະ ກິລາກໍຄືການພັດທະນາຊັບພະຍາກອນມະນຸດເປັນຂໍກຸນແຈສໍາຄັນໃນການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ, ເພື່ອນໍາເອົາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ແລະ ຄ່ອຍໄປສູ່ປະເທດອຸດສາຫະກໍາ ແລະ ທັນສະໄໝ. ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດຄັ້ງທີ VIII ກໍຄືມະຕິກອງປະຊຸມໃຫຍ່ສູນກາງພັກຄັ້ງທີ IX ໄດ້ເນັ້ນໃຫ້ເຫັນບົດບາດສໍາຄັນຂອງວຽກງານການສຶກສາ ແລະ ກິລາ ໂດຍຍົກໃຫ້ເຫັນການຈັດຕັ້ງປະຕິບັດ ບາດກ້າວ 4 ບຸກທະລຸ ເພື່ອບັນລຸນະໂຍບາຍໃໝ່ ແລະ ການພັດທະນາປະເທດຊາດ ເຊິ່ງໃນນັ້ນກໍລວມມີຄວາມກ້າວໜ້າທາງດ້ານການເມືອງແນວຄິດ, ການພັດທະນາຊັບພະຍາກອນມະນຸດ, ແກ້ໄຂບັນຫາສິ່ງທ້າທາຍຕ່າງໆທີ່ເປັນອຸປະສັກ ໃນການ ດໍາເນີນທຸລະກິດ, ເອົາໃຈໃສ່ຫຼຸດຜ່ອນຄວາມທຸກຍາກ, ຂະແໜງການສຶກສາ ແລະ ກິລາ ຮຽກຮ້ອງໃຫ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ຊັບພະຍາກອນມະນຸດ ໂດຍສະເພາະແມ່ນປັບປຸງທັກສະ ແລະ ຄວາມສາມາດຂອງກໍາລັງແຮງງານ, ສິ່ງເສີມໃຫ້ເຂົາເຈົ້າມີລະບຽບວິໄນ, ມີຄວາມອົດທົນ, ເພີ່ມຈໍານວນນັກຊ່ຽວຊານ ແລະ ຜູ້ຊໍານານງານ, ປັບປຸງຂີດຄວາມສາມາດທາງດ້ານເຕັກນິກ ແລະ ວິຊາຊີບໃຫ້ແກ່ລັດ, ພາກສ່ວນເອກະຊົນ ແລະ ບັນດາຜູ້ປະກອບການເພື່ອໃຫ້ສາມາດແຂ່ງຂັນ. ພາຍໃນປະຊາຄົມເສດຖະກິດອາຊຽນ ແລະ ໃນໂລກ (ກະຊວງສຶກສາທິການ ແລະ ກິລາ, 2016 -2020) ຈຸດສຸມຂອງການພັດທະນາການສຶກສາ ແມ່ນການສ້າງບຸກຄະລາກອນປະເພດຕ່າງໆເຊັ່ນ: ກໍາມະກອນມືອາ ຊີບ, ນາຍຊ່າງ, ນັກວິຊາການ, ວິສະວະກອນ, ຜູ້ຄຸ້ມຄອງບໍລິຫານ, ຜູ້ປະກອບການ, ຜູ້ຈັດການໃຫ້ມີຄວາມຮູ້ຄວາມສາມາດ ທັງມີຄຸນນະພາບ ແລະ ມີຈໍານວນພຽງພໍ ສໍາລັບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນທຸກຂົງເຂດພັກ - ລັດ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານໃນທົ່ວສັງຄົມ. ສິ່ງ ເສີມການຂະຫຍາຍການສຶກສາໃຫ້ກວ້າງຂວາງ, ແຂງແຮງ ແລະ ມີຈຸດສຸມໂດຍເລັ່ງໃສ່ເຂດຊົນນະບົດ, ເຂດຊົນເຜົ່າຫ່າງໄກສອກຫຼີກ. ຖືເອົາການລຶບລ້າງຄວາມບໍ່ຮູ້ໜັງສືຕິດພັນກັບການຈັດຕັ້ງການຮຽນ ແລະ ການເຝິກອົບຮົມວິຊາຊີບຂັ້ນພື້ນຖານຕາມຄວາມຮຽກຮ້ອງຕ້ອງການຂອງແຕ່ລະທ້ອງຖິ່ນເພື່ອແກ້ໄຂຄວາມທຸກຍາກ ແລະ ບັນລຸເປົ້າໝາຍ ດ້ານການພັດທະນາ (ກະຊວງສຶກສາທິການ ແລະ ກິລາ , 2011).

ຈາຣຸນ ເກົ້າອ້ຽນ (2014:5-6) ໄດ້ເວົ້າວ່າ: ການບໍລິຫານວິຊາການເປັນໝາກຫົວໃຈຫຼັກຂອງການບໍລິຫານໂຮງຮຽນ ສ່ວນການບໍລິຫານດ້ານບຸກຄະລາກອນ, ການບໍລິຫານດ້ານງົບປະມານ ແລະ ການບໍລິຫານທົ່ວໄປເປັນສ່ວນປະກອບທີ່ກະທໍາໃຫ້ໜ່ວຍງານການສຶກສາດໍາເນີນໄປດ້ວຍຄວາມຄ່ອງແຄ້ວ, ຜູ້ບໍລິຫານທຸກຄົນຄວນຈະຮັບ ຜິດຊອບເປັນຜູ້ນໍາຂອງຄູໃນດ້ານວິຊາການເປັນອັນດັບໜຶ່ງ, ເພາະໜ້າທີ່ຂອງໂຮງຮຽນ ຫຼື ສະຖາບັນການສຶກສາທຸກແຫ່ງຄືການໃຫ້ຄວາມຮູ້ແກ່ນັກຮຽນໃນດ້ານວິຊາການໂດຍການເຮັດວຽກຮ່ວມກັບຄູ, ຕັກເຕືອນ, ໃຫ້ຄໍາແນະນໍາ ແລະ ປະສານງານໃຫ້ຄູທຸກຄົນເຮັດວຽກຢ່າງມີປະສິດທິພາບ. ວຽກງານວິຊາການເປັນວຽກງານຫຼັກຂອງການບໍລິ ຫານການສຶກສາບໍ່ວ່າການສຶກສາຈະເປັນປະເພດໃດ, ມາດຕະຖານ ແລະ ຄຸນນະພາບຂອງການສຶກສາຈະພິຈາລະນາໄດ້ຈາກຜົນງານທາງດ້ານວິຊາການ ເນື່ອງຈາກວຽກງານວິຊາການກ່ຽວຂ້ອງກັບຫຼັກສູດການຈັດໂປຣແກຣມການສຶກສາ ແລະ ການຈັດການຮຽນ - ການສອນເຊິ່ງເປັນໝາກຫົວໃຈຂອງການສຶກສາເຊິ່ງອາດ

ຈະກ່ຽວຂ້ອງທາງກົງ ຫຼື ທາງອ້ອມຢູ່ກັບລັກສະນະຂອງວຽກງານນັ້ນ.

ການບໍລິຫານເປັນວຽກງານວິຊາການໃນໂຮງຮຽນມີຄວາມສໍາຄັນຫຼາຍ ແລະ ຈໍາເປັນຢ່າງຍິ່ງທີ່ຜູ້ບໍລິຫານສະ ຖານການສຶກສາຄວນໃຫ້ຄວາມສໍາຄັນເປັນພິເສດ ແລະ ເນັ້ນໜັກໃນການບໍລິຫານດ້ານນີ້ເປັນອັນດັບຕົ້ນ ການບໍລິ ຫານວິຊາການກ່ຽວຂ້ອງກັບກິດຈະກໍາທຸກຊະນິດໃນສະຖານການສຶກສາ ໂດຍສະເພາະເປັນການປັບປຸງການຮຽນ - ການສອນປະສິດທິພາບຂອງການຈັດການສຶກສາ ຈະເປັນເຄື່ອງມືຊີ້ວັດຄວາມສໍາເລັດ ແລະ ຄວາມສາມາດຂອງຜູ້ບໍລິຫານໂດຍມີຈຸດມຸ່ງໝາຍຄື ການພັດທະນາຄຸນນະພາບການສຶກສາ ເພື່ອໃຫ້ເກີດປະໂຫຍດສູງສຸດແກ່ຜູ້ຮຽນ, ເປັນການປູກຝັງໃຫ້ນັກຮຽນເປັນຄົນດີຂອງສັງຄົມ, ມີຄວາມຮູ້, ມີທັກສະ, ເຈດຕະຄະຕິ ແລະ ຄຸນລັກສະນະທີ່ເພິ່ງຂອງຫຼັກສູດ (ໄຊຍະ ຊວນປະກອບ, 2007:46)

ອີງຕາມບົດສະຫຼຸບຫ້ອງການສຶກສາທິການ ແລະ ກິລາ ເມືອງສາລະວັນ ແລະ ເມືອງວາປີ ເຫັນວ່າຍັງມີບັນຫາ ແລະ ສິ່ງທີ່ທ້າທາຍຫຼາຍ, ເຖິງວ່າຈະມີຫຼາຍອີງການລວມທັງພາກລັດ ແລະ ເອກະຊົນ ໄດ້ລົງທຶນເຂົ້າໃນການພັດທະນາການສຶກສາຊັ້ນປະຖົມ ແຕ່ການພັດທະນາດັ່ງກ່າວຍັງມີລັກສະນະກະແຈກກະຈາຍລົງເລິກເປົ້າໝາຍ ຂອງໃຜລາວ, ບໍ່ຕໍ່ເນື່ອງ, ສະພາບການບັນຈຸ ແລະ ນໍາໃຊ້ຄູໂດຍສະເພາະເຂດຮ່າງໄກສອກຫຼີກຍັງບໍ່ພຽງພໍ, ເຖິງວ່າອັດຕາເຂົ້າຮຽນຈະມີລັກສະນະເພີ່ມຂຶ້ນ, ອັດຕາຄ້າງຫ້ອງຫຼຸດລົງ ແລະ ອັດຕາປະລະຂອງນັກຮຽນຍັງມີທ່າອ່ຽງເພີ່ມຂຶ້ນ, ອັດຕາຄ້າງຫ້ອງ, ອັດຕາປະລະ ແລະ ອັດຕາຫຼອດເຫຼືອ ປ 5 ຍັງບໍ່ທັນບັນລຸຕາມຄາດໝາຍ, ຄວາມເປັນເຈົ້າການຂອງຄູໃນການສິດສອນຍັງບໍ່ທັນໄດ້ດີ, ບໍ່ເອົາໃຈໃສ່ຕິດຕາມ ແລະ ຊຸກຍູ້ນັກຮຽນຜູ້ຮຽນອ່ອນ, ແຕ່ງບົດສອນ ແລະ ຜະລິດສື່ການສອນ ບໍ່ຕໍ່ເນື່ອງຄຸນນະພາບຂອງການສຶກສາຢູ່ໃນຊັ້ນປະຖົມຍັງເປັນປະເດັນບັນຫາທີ່ທ້າທາຍ: ທັກສະການອ່ານ, ການຂຽນ ແລະ ການຄິດໄລ່ເລກຂອງນັກຮຽນທີ່ຈົບ ປ 5 ຍັງຕໍ່າກວ່າມາດຕະຖານ, ການຕິດຕາມ ແລະ ຊຸກຍູ້ການສິດສອນຂອງຄູຂອງຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຄູນິເທດຍັງບໍ່ທັນໄດ້ທົ່ວເຖິງ, ບໍ່ຕໍ່ເນື່ອງ ແລະ ບໍ່ລົງເລິກເປົ້າໝາຍ, ສະພາບແວດລ້ອມໃນໂຮງຮຽນຍັງບໍ່ເປັນທີ່ດຶງດູດນັກຮຽນ, ຫ້ອງຮຽນມີລັກສະນະເປ່ເພ, ຊຶ່ວຄາວ ແລະ ຊຸດໂຊມ, ອໍານວຍການຍັງບໍ່ເປັນເຈົ້າການໃນການພັດທະນາໂຮງຮຽນ, ຈໍານວນນັກຮຽນທີ່ມີຂະໜາດນ້ອຍຍັງມີຫຼາຍທົ່ວແຂວງ ເຊິ່ງບໍ່ສາມາດໂຮມເຂົ້າກັນໄດ້ເຮັດໃຫ້ເກີດມີການສອນຫ້ອງຄວບຈໍານວນຫຼາຍ ແລະ ການຈັດຄູສອນດີສອນເກັ່ງປະຕິບັດບໍ່ໄດ້ດີ. (ບົດສະຫຼຸບຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ ສາລະວັນ ແລະ ເມືອງ ວາປີ ແຂວງສາລະວັນ, 2022).

ຈາກບັນຫາ ແລະ ສາເຫດດັ່ງກ່າວນັ້ນ ຜູ້ຄົ້ນຄວ້າມີຄວາມສົນໃຈ ແລະ ຕ້ອງການສຶກສາເພື່ອຢາກຮູ້ວ່າ: ສະພາບການປະຕິບັດວຽກງານບໍລິຫານວິຊາການ ໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນ ໂດຍຄາດຄະເນວ່າ ຜົນການຄົ້ນຄວ້າຈະເປັນປະໂຫຍດຕໍ່ການພັດທະນາວຽກງານການບໍລິຫານ ວິຊາການ ໃຫ້ແກ່ຜູ້ບໍລິຫານໂຮງຮຽນປະຖົມສຶກສາ ແຂວງສາລະວັນ.

## 2. ວິທີການຄົ້ນຄວ້າ

### 2.1 ແບບແຜນການຄົ້ນຄວ້າ

ການວິໄຈໃນຫົວຂໍ້ ການບໍລິຫານວຽກງານວິຊາການກຸ່ມໂຮງຮຽນປະຖົມສຶກສາ ແຂວງສາລະວັນ ເປັນການວິໄຈເຊີງສໍາຫຼວດ ( Survey research ) ໂດຍການສໍາຫຼວດແນວຄິດຜູ້ບໍລິຫານແລະ ຄູສອນ ຕໍ່ກັບການບໍລິຫານທາງດ້ານວິຊາການຂອງກຸ່ມໂຮງຮຽນເມືອງ ສາລະວັນ ແລະ ເມືອງ ວາປີ ແຂວງ ສາລະວັນ.

### 2.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນໃຊ້ໃນການສຶກສາຄັ້ງນີ້ໄດ້ແກ່ຜູ້ບໍລິຫານ ແລະ ຄູສອນຈໍານວນ 699 ຄົນໃນນັ້ນ ຜູ້

ບໍລິຫານ 111 ຄົນ ແລະ ຄູສອນ 588 ຄົນ ໃນ 2 ເມືອງ ໄດ້ແກ່ບຸກຄະລາກອນທັງໝົດຢູ່ໃນໂຮງຮຽນປະຖົມສຶກສາ ເມືອງ ສາລະວັນ ແລະ ເມືອງ ວາປີ ແຂວງສາລະວັນ. ສົກຮຽນ 2022 - 2023 ເຊິ່ງນັກຄົ້ນຄວ້າໄດ້ກຳນົດເອົາຜູ້ບໍລິຫານ 87 ຄົນ ແລະ ຄູສອນ 238

**2.3 ເຄື່ອງມືສຳລັບການຄົ້ນຄວ້າ**

ເຄື່ອງມືທີ່ໃຊ້ໃນການລວບລວມຂໍ້ມູນຄັ້ງນີ້ ປະກອບດ້ວຍ: ແບບສອບຖາມ Questionnaire ທີ່ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.95

ຕອນທີ 1: ເປັນຄຳຖາມກ່ຽວກັບຂໍ້ມູນທົ່ວໄປ ຂອງຜູ້ທີ່ຕອບແບບສອບຖາມເປັນກວດສອບລາຍການ (Check List) ຊຶ່ງປະກອບດ້ວຍ ເພດ, ຕຳແໜ່ງ ວຸດທິການສຶກສາ.

ຕອນທີ 2: ເປັນຖາມກຽວກັບຄວາມຄິດເຫັນກ່ຽວກັບການບໍລິຫານວິຊາການຢູ່ໂຮງຮຽນປະຖົມສຶກສາເມືອງ ສາລະວັນ ແລະ ເມືອງ ວາປີ ເປັນແບບສອບຖາມປະເມີນຄ່າ (Rating scale) 5 ລະດັບ

ຕອນທີ 3: ເປັນຄຳຖາມແບບປາຍເປີດ ເພື່ອຖາມຄວາມຄິດເຫັນເພີ້ມເຕີມກ່ຽວກັບການບໍລິຫານວິຊາການຢູ່ໂຮງຮຽນປະຖົມສຶກສາ ເມືອງ ສາລະວັນ ແລະ ເມືອງ ວາປີ ແຂວງສາລະວັນ.

**2.4 ການເກັບ ແລະ ລວບລວມຂໍ້ມູນ**

1) ຄົ້ນຄວ້າ, ຂໍໜັງສືຈາກຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກເຖິງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ ສາລະວັນ ແລະ ເມືອງວາປີ ສາລະວັນ ເພື່ອຂໍອະນຸຍາດເກັບກຳຂໍ້ມູນ ໂຮງຮຽນປະຖົມພາຍໃນ ເມືອງ ສາລະວັນ ແລະ ເມືອງ ວາປີ ແຂວງ ສາລະວັນ.

2) ຜູ້ຄົ້ນຄວ້າຂໍໜັງສືຈາກຫ້ອງການສຶກສາທິການ ແລະ ກິລາ ເມືອງ ສາລະວັນ ເຖິງຫົວໜ້າໝວດໂຮງຮຽນປະ ຖົມສຶກສາພາຍໃນ ເມືອງ ສາລະວັນ ແລະ ເມືອງ ວາປີ ແຂວງສາລະວັນ.

3) ຜູ້ຄົ້ນຄວ້າລົງໄປແຈກຢາຍແບບສອບຖາມໃຫ້ແກ່ຜູ້ບໍລິຫານ (ຫົວໜ້າໝວດໂຮງຮຽນ) ແລະ ຄູສອນ ພ້ອມ ນຳໜັງສືຂໍຄວາມຮ່ວມມື ໃນການຕອບແບບສອບຖາມໄປຫາຫົວໜ້າໝວດໂຮງຮຽນປະຖົມສຶກສາພາຍໃນເມືອງສາລະວັນ ແລະ ເມືອງ ວາປີ ແຂວງສາລະວັນ. ແລ້ວໄປຮັບເອົາແບບສອບຖາມ ພ້ອມທັງກວດສອບຄວາມຖືກຕ້ອງຂອງເອກະສານແບບສອບຖາມ.

**2.5 ການວິເຄາະຂໍ້ມູນ**

ຜູ້ຄົ້ນຄວ້າກວດສອບຄວາມຖືກຕ້ອງຂອງຂໍ້ມູນ ແລະ ວິເຄາະຂໍ້ມູນໂດຍການໃຊ້ໂປຣແກຣມສຳເລັດ ຮູບຕາມຂັ້ນຕອນດັ່ງນີ້:

**1.** ວິເຄາະຂໍ້ມູນກ່ຽວກັບສະຖານະພາບທົ່ວໄປຂອງຜູ້ຕອບແບບສອບຖາມໃນຕອນທີໜຶ່ງ ໂດຍການກຳນົດຫາຄ່າຄວາມຖີ່ (f ) ແລະ ຫາຄ່າສ່ວນຮ້ອຍ(%) ນຳສະເໜີເປັນຕາຕະລາງ.

**2.** ວິເຄາະຂໍ້ມູນຜູ້ບໍລິຫານ ແລະ ຄູສອນ ໃຊ້ຂໍ້ມູນຈາກແບບສອບຖາມຕອນທີສອງ ໂດຍການຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (SD) ໂດຍການກຳນົດເກນຄ່າສະເລ່ຍດັ່ງນີ້ ຈັນທະວີ ສີສະຫວາດ (2017:49)

ຄ່າສະເລ່ຍ 4.51 - 5.0 ໝາຍຄວາມວ່າ ດີທີ່ສຸດ, ຄ່າສະເລ່ຍ 3.51 - 4.50 ໝາຍຄວາມວ່າ ດີ. ຄ່າສະເລ່ຍ 2.51 - 3.50 ໝາຍຄວາມວ່າ ປານກາງ, ຄ່າສະເລ່ຍ 1.51 - 2.50 ໝາຍຄວາມວ່າ ລະດັບອ່ອນ, ຄ່າສະເລ່ຍ 1.00 - 1.50
ໝາຍຄວາມວ່າ ອ່ອນທີ່ສຸດ.

**3.** ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນໂດຍນຳໃຊ້ສະຖິຕິທົດສອບ (T-test) ທີ່ມີຕົວຜັນປ່ຽນສອງລະດັບ ແລະ ໃຊ້ສະຖິຕິທົດສອບ (F-test) ທີ່ມີຕົວປ່ຽນສາມລະດັບດ້ວຍການວິເຄາະຄວາມຜັນປ່ຽນແບບຈຳແນກທາງດຽວ (One way ANOVA).

ການວິເຄາະຂໍ້ມູນຄວາມຄິດເຫັນເພີ່ມເຕີມດ້ວຍການຈັດກຸ່ມຂໍ້ມູນທີ່ຄ້າຍຄືກັນ ມາຂຽນເປັນບັນຍາຍແບບລຽງຄວາມ.

**3. ຜົນໄດ້ຮັບ**

ການບໍລິຫານວິຊາການກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ໂດຍພາບລວມພົບວ່າການ

ບໍລິຫານ ທາງດ້ານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ຈັດຢູ່ໃນລະດັບດີ.

ຜົນການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການບໍລິຫານວຽກງານວິຊາການ ກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນ ຜູ້ບໍລິຫານ ແລະ ຄູສອນທີ່ມີເພດ, ຕໍາແໜ່ງຕ່າງກັນໂດຍພາບລວມ ເຫັນວ່າບໍ່ແຕກຕ່າງກັນ, ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນກ່ຽວກັບການບໍລິ ຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ແລະ ແຕ່ລະດ້ານເຫັນວ່າແຕກຕ່າງກັນ.

ແນວທາງໃນການປັບປຸງການບໍລິຫານວຽກວິຊາການ ໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນ ດ້ານການບໍລິຫານຫຼັກສູດ: ຕ້ອງມີການປັບປຸງຫຼັກສູດໃຫ້ມີຄວາມເໝາະສົມກັບອາຍຸຂອງນັກຮຽນ, ປັບປຸງເນື້ອໃນບາງວິຊາ, ໂຮງຮຽນຕ້ອງມີການນິເທດຫຼັກສູດກ່ອນການສ້າງໂຄງການສອນ.

ດ້ານການບໍລິຫານດ້ານການຮຽນ -ການສອນ: ຕ້ອງຈັດກິດການຮຽນ-ການສອນໃຫ້ແທດເໝາະກັບນັກຮຽນ, ເໝາະກັບລະດັບຄວາມຮູ້ຄວາມສາມາດ, ອາຍຸ ແລະ ລະດັບສະຕິປັນຍາຂອງນັກຮຽນໂດຍການນໍາໃຊ້ວິທີ ສິດສອນທີ່ຫຼາກຫຼາຍຮູບແບບ.

ການບໍລິຫານສື່ການຮຽນ - ການສອນ: ມີແນວທາງໃນການສົ່ງເສີມໃຫ້ຄູໄດ້ຜະລິດສື່ການຮຽນ - ການສອນການນໍາໃຊ້ສື່ ຫຼື ສະແດງສື່ໃຫ້ເໝາະສົມ ແລະ ມີສ່ວນຮ່ວມຂອງນັກຮຽນໃນການສ້າງສື່ການຮຽນ - ການສອນໃຫ້ຫຼາຍ.

ດ້ານການບໍລິຫານດ້ານວັດ - ປະເມີນຜົນການຮຽນ: ມີແນວທາງສົ່ງເສີມໃຫ້ຄູໄດ້ອົບຮົມວິທີການວັດ - ປະ ເມີນຜົນຖືກຕ້ອງ, ໃຫ້ມີການປະເມີນກ່ອນການຮຽນ, ລະຫວ່າງຮຽນ, ຫຼັງການຮຽນ ແລະ ການປະເມີນຕ້ອງມີລະ ດັບຄວາມຍາກ - ງ່າຍຂອງກິດຈະກໍາເພື່ອຊຸກຍູ້ໃຫ້ນັກຮຽນຄົ້ນຄວ້າບົດຮຽນໃຫ້ ຫຼາຍຂຶ້ນ.

ດ້ານການບໍລິຫານການນິເທດພາຍໃນ: ຕ້ອງມີການສ້າງຄູນິເທດປະຈໍາໂຮງຮຽນ ແລະ ຕ້ອງໄດ້ຮັບການເຝິກ ອົບຮົມວິທີການສອນທີ່ຫຼາກຫຼາຍໂຮງຮຽນຕ້ອງມີການຈັດນິເທດໃນໂຮງຮຽນຕົນຢ່າງໜ້ອຍປີລະສອງຄັ້ງ.

ຄໍາສັບສໍາຄັນ: ການບໍລິຫານ, ວຽກງານວິຊາການ

**4. ວິພາກຜົນ**

ຈາກຜົນການຄົ້ນຄວ້າການບໍລິຫານວຽກງານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນ ຜູ້ຄົ້ນມີບາງປະເດັນຈະໄດ້ນໍາມາອະພິປາຍຜົນດັ່ງນີ້:

1) ສະພາບການບໍລິຫານວຽກງານວິຊາການ ໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງສາລະວັນ

ຈາກການສຶກສາການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນໃນ 5 ດ້ານພົບວ່າຜົນການຄົ້ນຄວ້າມີປະເດັນສໍາຄັນດັ່ງນີ້: ການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນໂດຍພາບລວມ ແລະ ແຕ່ລະດ້ານແມ່ນຈັດຢູ່ໃນລະດັບດີ ເມື່ອພິຈາລະນາແຕ່ລະດ້ານເຫັນວ່າໃນລະດັບດີ ເນື່ອງຈາກວ່າ ຜູ້ບໍລິຫານ ແລະ ຄູ ໄດ້ເອົາໃຈໃສ່ໃນການວັດປະເມີນຜົນການປະຕິບັດວຽກງານງານຂອງຄູ ແລະ ວັດປະເມີນຜົນການຮຽນ-ການສອນຢ່າງເປັນລະບົບຕໍ່ເນື່ອງ, ເອົາໃຈໃສ່ໃນການປະຕິບັດຫຼັກສູດການຮຽນ-ການສອນໃຫ້ເປັນໄປຕາມເງື່ອນໄຂມາດຖານຫຼັກສູດແຫ່ງຊາດ, ເອົາໃຈໃສ່ນິຕິດຕາມ, ຈັດກອງປະຊຸມນິເທດແລກປ່ຽນການຮຽນ-ການສອນຢ່າງເປັນປົກກະຕິ ເຊິ່ງສອດຄ່ອງກັບບົດວິໄຈຂອງພູດທະສອນ ພົມມະວິພົມມະວິ (2015 :42) ໄດ້ການຄົ້ນຄວ້າກ່ຽວກັບການບໍລິຫານວິຊາການ ໂຮງຮຽນມັດທະຍົມສົມບູນ ເມືອງແປກ ແຂວງຊຽງຂວາງຜົນການຄົ້ນຄວ້າພົບວ່າ: 1) ການບໍລິຫານ ວິຊາການ ໂຮງຮຽນມັດທະຍົມສົມບູນ ເມືອງແປກ ແຂວງຊຽງຂວາງ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແລ້ວໃນແຕ່ລະດ້ານ ເຫັນວ່າທຸກດ້ານຢູ່ໃນລະດັບດີ.

1. ດ້ານການບໍລິຫານການວັດ - ປະເມີນຜົນ:

ການບໍລິຫານໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນໂດຍລວມແມ່ນຢູ່ໃນລະດັບດີເມື່ອພິຈາລະນາແຕ່ລະຂໍ້ພົບວ່າຢູ່ໃນລະດັບດີເນື່ອງ. ເຊິ່ງສອດຄ່ອງກັບບົດວິໄຈຂອງ ສົມບູນ ສີລິສິງຄາມ (2018 : 72) ໄດ້ຄົ້ນຄວ້າກ່ຽວການບໍລິຫານວິຊາການໂຮງຮຽນ

ປະຖົມສຶກສາເມືອງ ສາລະວັນ ແຂວງ ສາລະວັນ ຜົນການຄົ້ນຄ້ວາພົບວ່າ: 1) ການປະຕິບັດວຽກງານວິຊາການຂອງໂຮງຮຽນ ປະຖົມສຶກສາເມືອງ ສາລະວັນ ແຂວງ ສາລະວັນ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາຫຼາຍດ້ານພົບວ່າຢູ່ໃນລະດັບຫຼາຍທຸກດ້ານ ເມື່ອລຽງແຕ່ຫຼາຍຫາໜ້ອຍໄດ້ແກ່ດ້ານການວັດ - ປະເມີນຜົນ, ຮອງມາແມ່ນດ້ານການຈັດການຮຽນ - ການສອນ, ດ້ານຫຼັກສູດ, ດ້ານການນິເທດພາຍໃນ ແລະ ດ້ານການບໍລິຫານສື່ການຮຽນ - ການສອນ. 2) ຜົນປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກຽວກັບການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງ ສາລະວັນ ແຂວງ ສາລະວັນໃນດ້ານການບໍລິຫານຫຼັກສູດ, ການບໍລິຫານການຮຽນ - ການສອນ, ການບໍລິຫານສື່ການຮຽນ - ການສອນ, ການບໍລິຫານວັດ ແລະ ປະເມີນຜົນ ແລະ ດ້ານການນິເທດພາຍໃນໂດຍລວມບໍ່ແຕກຕ່າງກັນແຕ່ເມື່ອ ພິຈາລະນາເປັນລາຍດ້ານເຫັນວ່າການບໍລິຫານຫຼັກສູດມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

2. ດ້ານການບໍລິຫານດ້ານຫຼັດສູດ

ການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນໂດຍລວມແມ່ນຢູ່ໃນລະດັບດີ ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຢູ່ໃນລະດັບດີເນື່ອງຈາກວ່າຜູ້ບໍລິຫານ ແລະ ຄູສອນມີຄວາມເຂົ້າໃຈກົງກັນ, ມີການກຳນົດການນຳໃຊ້ຫຼັກສູດແກນກາງ, ໃນຂັ້ນຕອນການຈັດຕັ້ງປະຕິບັດມີການທົດລອງນໍາໃຊ້, ຖອດຖອນບົດຮຽນ, ມີການຝຶກອົບຮົມກ່ຽວກັບການນຳໃຊ້ຫຼັກສູດ. ໃນນັ້ນ, ຂໍ້ທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນຂໍ້ທີ 4 ໃຫ້ຊຸມຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາຫຼັກສູດ ແລະ ນຳໃຊ້ຫຼັກສູດ; ຮອງລົງມາແມ່ນຂໍ້ທີ 1 ມີການມີການປະຕິບັດຫຼັກສູດຕາມນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາກຳນົດໄວ້; ຮອງລົງມາແມ່ນຂໍ້ທີ 3 ມີການຈັດຕາຕະລາງການຮຽນ - ການສອນປະຈຳພາກຮຽນ ແລະ ປະຈຳປີ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍແມ່ນຂໍ້ທີ 5 ມີການຈັດກອງປະຊຸມ ແລະ ສຳມະນາປັບປຸງຫຼັກສູດ ເຊິ່ງສອດຄ່ອງກັບບົດວິໄຈຂອງປີຊີງ (2020: 50) ໄດ້ສຶກສາກ່ຽວການບໍລິຫານວຽກວິຊາການຂອງໂຮງຮຽນມັດທະຍົມສົມບູນພາຍໃນເມືອງໜື່ນ ແຂວງວຽງຈັນ. ຜົນຂອງການຄົ້ນຄວ້າພົບວ່າສະພາບການບໍລິຫານວິຊາການຂອງໂຮງຮຽນມັດທະຍົມສົມບູນພາຍໃນເມືອງໜື່ນ ແຂວງວຽງຈັນ. 1) ການປະຕິບັດວຽກງານວິຊາການຂອງໂຮງຮຽນມັດທະຍົມສົມບູນພາຍໃນເມືອງໜື່ນ ແຂວງວຽງຈັນ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາລາຍດ້ານພົບວ່າຢູ່ໃນລະດັບຫຼາຍທຸກດ້ານເພື່ອລຽງແຕ່ຫຼາຍຫາໜ້ອຍໄດ້ແກ່ດ້ານຫຼັກສູດ, ຮອງມາແມ່ນດ້ານການວັດ - ປະເມີນຜົນ, ດ້ານການຈັດການຮຽນ -ການສອນ, ດ້ານການນິເທດພາຍໃນ ແລະ ດ້ານການບໍລິຫານສື່ການຮຽນ - ການສອນ, 2) ຜົນປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການບໍລິຫານວິຊາການໂຮງຮຽນມັດທະຍົມສົມບູນພາຍໃນເມືອງໜື່ນ ແຂວງ ວຽງຈັນ ໃນດ້ານການບໍລິຫານຫຼັກສູດ, ການບໍລິຫານການຮຽນ - ການສອນ, ການບໍລິຫານສື່ການຮຽນ - ການສອນ, ການບໍລິຫານວັດ ແລະ ປະເມີນຜົນ ແລະ ດ້ານການນິເທດພາຍໃນໂດຍລວມບໍ່ແຕກຕ່າງກັນແຕ່ເມື່ອພິຈາລະນາເປັນລາຍດ້ານເຫັນວ່າການບໍລິຫານຫຼັກສູດມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

3. ດ້ານການຈັດການຮຽນ - ການສອນ

ການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນໂດຍລວມແມ່ນຢູ່ໃນລະດັບດີ ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກຂໍ້ຢູ່ໃນລະດັບດີ ເນື່ອງຈາກວ່າຄູສອນປະຈຳໄດ້ສຶກສາຫຼັກສູດໃຫ້ລະອຽດ, ມີການສ້າງແຜນໄລຍະສັ້ນ - ຍາວ, ຄູສອນມີການຊອກຮູ້ຮໍ່າຮຽນສິ່ງໃໝ່ເພື່ອນຳໃຊ້ເຂົ້າໃນກິດຈະການຮຽນ - ການສອນ, ມີການສົ່ງເສີມແຫຼ່ງການຮຽນຮູ້, ຄູສອນມີການຮ່ວມໂມງສອນເພື່ອຖອດຖອນບົດຮຽນເຊິ່ງກັນ ແລະ ກັນ. ໃນນັ້ນ, ຂໍ້ທີມີຄ່າສະເລ່ຍສູງກວ່າໝູ່ແມ່ນຂໍ້ທີ 4 ມີການຈັດຄູສອນແທນໃນກໍລະນີຄູປະຈຳຫ້ອງຂາດໄດ້ຢ່າງເໝາະສົມ ແລະ ທັນການ; ຮອງລົງມາແມ່ນຂໍ້ທີ 6 ມີການຈັດກອງປະຊຸມສຳມະນາເພື່ອປັບປຸງແກ້ໄຂການຈັດການຮຽນ - ການສອນ ແລະ ຂໍ້ທີມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 5 ຄູມີເຕັກນິກ ແລະ

ວິທີການສອນແບບໃໝ່ຢ່າງຫາກຫຼາຍ. ເຊິ່ງສອດຄ່ອງກັບບົດວິໄຈຂອງແຄທິຍາ ອິນທິບ (2016: ບົດຄັດຫຍໍ້) ໄດ້ສຶກສາກ່ຽວກັບການສຶກສາສະພາບ ແລະ ບັນຫາການບໍລິຫານງານວິຊາການຂອງສະຖານສຶກສາ ທີ່ມີນັກຮຽນຕ່າງດ້າວສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ພະນະຄອນ ສີອາຍຸທະຍາເຂດ 1 ແລະ ເຂດ 2. ມະຫາວິທະຍາໄລນະຄອນສີອາຍຸທະຍາ, ຜົນການວິໄຈພົບວ່າ:

1) ສະພາບການບໍລິຫານງານວິຊາການຂອງສະຖານສຶກສາທີ່ມີນັກຮຽນຕ່າງດ້າວສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາພະນະຄອນສີອາຍຸທະຍາເຂດ 1 ແລະ ເຂດ 2 ໂດຍທັງໝົດຢູ່ໃນລະດັບປານກາງ ໂດຍດ້ານທີ່ມີຄ່າສະເລ່ຍສູງທີ່ສຸດຄື: ດ້ານພັດທະນາຫຼັກສູດສະຖານສຶກສາ, ຮອງລົງມາຄືດ້ານການຈັດການຮຽນ - ການສອນ ແລະ ດ້ານທີ່ມີຄ່າສະເລ່ຍຕ່ຳທີ່ສຸດຄື ດ້ານສື່ການຮຽນ - ການສອນ.

2) ບັນຫາການບໍລິຫານງານວິຊາການຂອງສະຖານສຶກສາທີ່ມີນັກຮຽນຕ່າງດ້າວ, ສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາປະນະຄອນສີອາຍຸທະຍາເຂດ 1 ແລະ ເຂດ 2 ໂດຍທັງໝົດຢູ່ໃນລະດັບປານກາງໂດຍດ້ານທີ່ມີຄ່າສະເລ່ຍສູງທີ່ສຸດຄື: ດ້ານການຈັດການຮຽນ - ການສອນ, ຮອງລົງມາຄື ດ້ານສືການຮຽນ - ການສອນ ແລະ ດ້ານທີ່ມີຄ່າສະເລ່ຍຕ່ຳທີ່ສຸດຄື ດ້ານການວັດຜົນ ແລະ ປະເມີນຜົນການຮຽນ.

4. ດ້ານການນິເທດພາຍໃນ

ການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນໂດຍລວມແມ່ນຢູ່ໃນລະດັບດີ ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກຂໍ້ຢູ່ໃນລະດັບດີ ເນື່ອງຈາກວ່າຜູ້ບໍລິຫານໄດ້ແຕ່ງຕັ້ງນິເທດພາຍໃນໂຮງຮຽນສະເພາະເພື່ອແນະນຳຄູແຕ່ລະລາຍວິຊາ, ມີການກຳນົດວິທີການ ແລະ ໄລຍະການເວລານິເທດພາຍໃນ. ການຄວບຄຸມ ແລະ ສົ່ງສົມໃຫ້ມີການດຳນີນການນິເທດພາຍໃນຢ່າງສະໝ່ຳສະເໝີຮ່ວມກັບການແກ້ໄຂບັນຫາທີ່ເກີດຂຶ້ນ. ໃນນັ້ນ, ຂໍ້ທີມີຄ່າສະເລ່ຍສູງກວ່າໝູ່ແມ່ນຂໍ້ທີ 4 ໂຮງຮຽນຈັດໃຫ້ຄູມີສ່ວນຮ່ວມໃນການນິເທດ; ຮອງລົງມາແມ່ນຂໍ້ທີ 8 ມີການບັນທຶກຂໍ້ມູນການນິເທດ ແລະ ຖອດຖອນບົດຮຽນໃນການນິເທດທຸກຄັ້ງ; ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 7 ມີການດຳເນີນການນິເທດໃນຫຼາຍຮູບແບບ ແລະ ເໝາະສົມກັບໂຮງຮຽນ. ເຊິ່ງສອດຄ່ອງກັບບົດວິໄຈຂອງຈິໝັ້ນຍາພິນ ໂຄດຫຼັກຄຳ (2015: 55) ໄດ້ຄົ້ນຄວ້າກ່ຽວກັບແນວທາງການບໍລິຫານວຽກວິຊາການຂອງໂຮງ ຮຽນມັດທະຍົມສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາເຂດ 19. ຜົນການຄົ້ນຄວ້າພົບວ່າ : 1) ສະພາບການບໍລິຫານວຽກວິຊາການຂອງໂຮງຮຽນມັດທະຍົມສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາເຂດ 19 ພົບວ່າ: ສະພາບການບໍລິຫານວຽກວິຊາການຂອງໂຮງຮຽນມັດທະຍົມສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 19 ໂດຍລວມຢູ່ໃນລະດັບຫຼາຍ, ໂດຍດ້ານທີ່ມີຄ່າສະເລ່ຍສູງສຸດໄດ້ແກ່ການວາງແຜນວຽກວິຊາການ ແລະ ການນິເທດວຽກວິຊາການ, ຮອງລົງມາແມ່ນລະບົບການວັດຜົນ ແລະ ປະເມີນຜົນການຮຽນ ແລະ ດ້ານທີ່ມີຄ່າສະເລ່ຍໜ້ອຍທີ່ສຸດ ແມ່ນການຈັດສື່ການຮຽນການສອນ. 2) ຜົນການສຶກສາໂຮງຮຽນຕົ້ນແບບທັງ 3 ໂຮງຮຽນເຖິງສະພາບການບໍລິຫານວິຊາການພົບວ່າ: ສະພາບການບໍລິຫານວິຊາການໂຮງ ຮຽນຕົ້ນແບບທັງ 3 ໂຮງຮຽນໂດຍລວມຢູ່ໃນລະດັບຫຼາຍ ໂດຍດ້ານທີ່ມີຄ່າສະເລ່ຍສູງສຸດ ໄດ້ແກ່ດ້ານການວາງແຜນວິຊາການ , ຮອງລົງມາແມ່ນການຈັດການຮຽນ - ການສອນ ແລະ ດ້ານທີ່ມີຄ່າສະເລ່ຍໜ້ອຍທີ່ສຸດແມ່ນການພັດທະ ນາຄູ ແລະ ບຸກຄະລາກອນທາງການສຶກສາ 3) ແນວທາງການບໍລິຫານວຽກວິຊາການຂອງໂຮງຮຽນມັດທະຍົມສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 19 ພົບວ່າສິ່ງທີ່ຕ້ອງການພັດທະນາວຽກງານວິຊາການອັນດັບໜຶ່ງໄດ້ແກ່ ລວບລວມຂໍ້ມູນປັນຍາທ້ອງຖິ່ນທຸກປະພດເພື່ອວິເຄາະຈຸດອ່ອນ, ຈຸດແຂງຂອງວຽກວິຊາການໃຫ້ທຸກຝ່າຍມີສ່ວນຮວມ ໃນການບໍລິຫານຫຼັກສູດປັບປຸງລະບົບການນິເທດພາຍໃນປະເມີນຜົນການຮຽນຕາມສະພາບຈິງ, ອັນດັບຕໍ່ມາກຳນົດວິໄສທັດງານດ້ານວິຊາການ, ການນິເທດ, ກຳກັບ,

ຕິດຕາມ, ການປະເມີນຜົນການໃຊ້ຫຼັກສູດ ສະຫຼຸບຜົນການນິເທດໄປວາງແຜນປັບປຸງການຈັດການຮຽນຮູ້.

1) ດ້ານການບໍລິຫານສື່ການຮຽນ - ການສອນການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນໂດຍລວມແມ່ນຢູ່ໃນລະດັບດີ ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ຂໍ້ທີມີຄ່າສະເລ່ຍສູງກວ່າໝູ່ແມ່ນຂໍ້ທີ 5 ມີຫ້ອງສະໝຸດທີ່ສາມາດຕອບສະໜອງປຶ້ມຕຳລາ ແລະ ເອກະສານຄົບຖ້ວນຕາມລາຍວິຊາຮຽນ; ຮອງລົງມາຂໍ້ທີ 7 ມີການຕິດຕາມ ແລະ ປະເມີນຜົນການນຳໃຊ້ສື່ການຮຽນ - ການສອນ ແລະ ຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ່ 4 ມີການນຳໃຊ້ສື່ທີ່ທັນສະໄໝເຂົ້າໃນການຮຽນ - ການສອນຢູ່ໃນລະດັບປານກາງອາດເປັນເພາະຄູອາຈານບາງຄົນບໍ່ໄດ້ຜ່ານການເຝິກອົບຮົມ, ປະສົບການສອນຍັງບໍ່ຫຼາຍ ຈຶ່ງເຮັດໃຫ້ຂາດຄວາມຊຳນິຊຳນານໃນການນຳໃຊ້ສື່ ແລະ ເທັກໂນໂລຊີທີ່ທັນສະໄໝເຂົ້າໃນການຮຽນ - ການສອນ. ເຊິ່ງສອດຄ່ອງກັບບົດວິໄຈແຄທີຍາ ອິນທິບ (2016: ບົດຄັດຫຍໍ້) ໄດ້ສຶກສາກ່ຽວກັບການສຶກສາສະພາບ ແລະ ບັນຫາການບໍລິຫານງານວິຊາການຂອງສະຖານສຶກສາທີ່ມີນັກຮຽນຕ່າງດ້າວສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ພະນະຄອນ ສີອາຍຸທະຍາເຂດ 1 ແລະ ເຂດ 2. ມະຫາວິທະຍາໄລນະຄອນສີອາຍຸທະຍາ, ຜົນການວິໄຈພົບວ່າ:

2) ສະພາບການບໍລິຫານງານວິຊາການຂອງສະຖານສຶກສາທີ່ມີນັກຮຽນຕ່າງດ້າວສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາພະນະຄອນສີອາຍຸທະຍາເຂດ 1 ແລະ ເຂດ 2 ໂດຍທັງໝົດຢູ່ໃນລະດັບປານກາງ ໂດຍດ້ານທີ່ມີຄ່າສະເລ່ຍສູງທີ່ສຸດຄື: ດ້ານພັດທະນາຫຼັກສູດສະຖານສຶກສາ, ຮອງລົງມາຄືດ້ານການຈັດການຮຽນ - ການສອນ ແລະ ດ້ານທີ່ມີຄ່າສະເລ່ຍຕ່ຳທີ່ສຸດຄື ດ້ານສື່ການຮຽນ - ການສອນ.

3) ບັນຫາການບໍລິຫານງານວິຊາການຂອງສະຖານສຶກສາທີ່ມີນັກຮຽນຕ່າງດ້າວ, ສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາປະນະຄອນສີອາຍຸທະຍາເຂດ 1 ແລະ ເຂດ 2 ໂດຍທັງໝົດຢູ່ໃນລະດັບປານກາງໂດຍດ້ານທີ່ມີຄ່າສະເລ່ຍສູງທີ່ສຸດຄື: ດ້ານການຈັດການຮຽນ - ການສອນ, ຮອງລົງມາຄື ດ້ານສື່ການຮຽນ - ການສອນ ແລະ ດ້ານທີ່ມີຄ່າສະເລ່ຍຕ່ຳທີ່ສຸດຄືດ້ານການວັດຜົນ ແລະ ປະເມີນຜົນການຮຽນ.

4) ປຽບທຽບຄວາມຄິດເຫັນກ່ຽວກັບການບໍລິຫານວິຊາການ ໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນ ຈຳແນກຕາມເພດ, ຕຳແໜ່ງ ວຸດທິການສຶກສາ.

ຜູ້ບໍລິຫານ ແລະ ຄູສອນມີຄວາມຄິດເຫັນຕໍ່ການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງ ສາລະວັນ ໂດຍບໍ່ແຕກຕ່າງກັນ ເຊິ່ງສອດຄ່ອງກັບບົດວິໄຈຂອງ ສົມບູນ ສີລິສິງຄາມ (2018 : 72) ໄດ້ຄົ້ນຄວ້າກ່ຽວການບໍລິຫານວິຊາການໂຮງຮຽນ ປະຖົມສຶກສາເມືອງ ສາ ລະວັນ ແຂວງ ສາລະວັນ ຜົນການຄົ້ນຄ້ວາພົບວ່າ: 1) ການປະຕິບັດວຽກງານວິຊາການຂອງໂຮງຮຽນ ປະຖົມສຶກສາເມືອງ ສາລະວັນ ແຂວງ ສາລະວັນ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາລາຍດ້ານພົບວ່າຢູ່ໃນລະດັບຫຼາຍທຸກດ້ານເມື່ອລຽງແຕ່ຫຼາຍຫາໜ້ອຍໄດ້ແກ່ດ້ານການວັດ - ປະເມີນຜົນ, ຮອງມາແມ່ນດ້ານການຈັດການຮຽນ - ການສອນ, ດ້ານຫຼັກສູດ, ດ້ານການນິເທດພາຍໃນ ແລະ ດ້ານການບໍລິຫານສື່ການຮຽນ - ການສອນ. 2) ຜົນປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກຽວກັບການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງ ສາລະວັນ ແຂວງ ສາລະວັນ ໃນດ້ານການບໍລິຫານຫຼັກສູດ, ການບໍລິຫານການຮຽນ - ການສອນ, ການບໍລິຫານສື່ການຮຽນ - ການສອນ, ການບໍລິຫານວັດ ແລະ ປະເມີນຜົນ ແລະ ດ້ານການນິເທດພາຍໃນ ໂດຍລວມບໍ່ແຕກຕ່າງກັນແຕ່ເມື່ອ ພິຈາລະນາເປັນລາຍດ້ານເຫັນວ່າການບໍລິຫານຫຼັກສູດມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

1) ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການປະຕິບັດການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນໂດຍຈຳແນກຕາມເພດ.

ຜູ້ບໍລິຫານ ແລະ ຄູສອນທີ່ມີເພດຕ່າງກັນໂດຍພາບລວມເຫັນວ່າບໍ່ແຕກຕ່າງກັນ. ມີພຽງດ້ານການຮຽນ -ການສອນ ແລະ ດ້ານການວັດ ແລະ ປະເມີນມີຄວາມ

ຄິດເຫັນແຕກຕ່າງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ເຊິ່ງສອດຄ່ອງກັບບົດວິໄຈຂອງ ສຸຊາດ ໃຫຍ່ເລີດ (2019: 76) ໄດ້ສຶກສາຄົ້ນຄວ້າກ່ຽວກັບວິຊາການສໍາລັບນັກຮຽນປະລິຍາທໍາ ພະແນກບາລີດີເດັ່ນ ກຸງເທບມະຫານະຄອນການຄົ້ນຄວ້າເຊິ່ງຜົນການວິໄຈພົບວ່າ: ຜົນການປຽບທຽບການບໍລິຫານວຽກງານວິຊາການນັກຮຽນ ປະລິຍາທໍາຈໍາແນກຕາມເພດ, ອາຍຸ, ວຸດທິ ແລະ ວຸດທິການສຶກສາໂດຍລວມພົບວ່າບໍ່ແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05. ສະຫຼຸບວ່າ ຜົນການວິເຄາະຂໍ້ມູນບໍ່ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ວ່າ ຜູ້ບໍລິຫານ ແລະ ຄູສອນທີ່ມີເພດຕ່າງກັນມີຄວາມຄິດເຫັນແຕກຕ່າງກັນ.

2) ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການປະຕິບັດການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ໂດຍຈໍາແນກຕາມຕໍາແໜ່ງ.

ຜູ້ບໍລິຫານ ແລະ ຄູສອນທີ່ມີ ຕໍາແໜ່ງໜ້າທີ່ຕ່າງກັນກ່ຽວກັບການຈັດຕັ້ງປະຕິບັດການບໍລິຫານວິຊາການ ໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ, ໂດຍພາບລວມ ແລະ ແຕ່ລະດ້ານເຫັນວ່າບໍ່ແຕກຕ່າງກັນ. ອາດເປັນເພາະຜູ້ບໍລິຫານ ແລະ ຄູສອນມີບົດບາດຄວາມເປັນຜູ້ນໍາກ້າຄິດ, ກ້າຕັດສິນໃຈນການສົ່ງເສີມການຈັດການຮຽນຮູ້ໃຫ້ຜູ້ຮຽນທາງດ້ານປະລິມານ, ການຈັດຫາວັດຖຸອຸປະກອນ, ຫຼັກສູດທີ່ໃຊ້ ແລະ ແນວທາງການຮຽນເພື່ອຮູ້ສະໜັບສະໜູນ ແລະ ສົ່ງເສີມການຈັດການຮຽນຮູ້ຈິ່ງຮັດໃຫ້ຜູ້ບໍລິຫານ ແລະ ຄູສອນມີຄວາມຄິດເຫັນຕໍ່ການບໍລິຫານວຽກງານວິຊາການບໍ່ແຕກຕ່າງກັນ. ມີພຽງ ດ້ານສື່ການຮຽນ-ການສອນເທົ່ານັ້ນຜູ້ບໍລິຫານ ແລະ ຄູສອນທີ່ມີຄວາມຄິດເຫັນແຕກຕ່າງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ເຊິ່ງສອດຄ່ອງກັບບົດວິໄຈຂອງ ສູນທອນ (2019: 40) ໄດ້ສຶກສາຫົວຂໍ້ການບໍລິຫານງານວິຊາການຂອງຜູ້ບໍລິຫານປະຈໍາຕໍາບົນສັງກັດສໍານັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ສະຕູຜົນການຄົ້ນຄວ້າພົບວ່າ ຜູ້ບໍລິຫານ ແລະ ຄູສອນທີ່ມີ ຕໍາແໜ່ງໜ້າທີ່ຕ່າງກັນມີຄວາມຄິດເຫັນຕໍ່ການບໍລິຫານວິຊາການໂຮງຮຽນປະຖົມສຶກສາ ສະຕູໂດຍລວມແມ່ນມີແນວຄວາມຄິດເຫັນບໍ່ແຕກຕ່າງກັນ ສະຫຼຸບວ່າ ຜົນການວິເຄາະຂໍ້ມູນບໍ່ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ວ່າ ຜູ້ບໍລິຫານ ແລະ ຄູສອນທີ່ມີຕໍາແໜ່ງໜ້າທີ່ຕ່າງກັນມີຄວາມຄິດເຫັນແຕກຕ່າງກັນ.

3) ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການປະຕິບັດການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ໂດຍຈໍາແນກຕາມວຸດທິການສຶກສາ

ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນກ່ຽວກັບການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ແລະ ແຕ່ລະດ້ານເຫັນວ່າແຕກຕ່າງກັນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ທັງນີ້ອາດເປັນເພາະຜູ້ບໍລິຫານ ແລະ ຄູສອນມີລະດັບການສຶກສາຕ່າງກັນການປະຕິບັດໜ້າທີ່ໃນສະຖານການສຶກສາມີລັກສະນະແຕກຕ່າງກັນ. ມີພຽງດ້ານວັດ ແລະ ປະເມີນຜົນ ແລະ ດ້ານການນິເທດພາຍໃນມີຄວາມຄິດເຫັນບໍ່ແຕກຕ່າງ. ເຊິ່ງສອດຄ່ອງກັບບົດວິໄຈຂອງ ອໍລະພອນ ສິນສິລິ (2020: 142) ສະຫຼຸບວ່າ ຜົນການວິເຄາະຂໍ້ມູນສອດຄອງກັບສົມມຸດຖານທີ່ຕັ້ງໄວ້ວ່າ ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາແຕກຕ່າງກັນມີຄວາມຄິດເຫັນຕ່າງກັນ.

## 5. ສະຫຼຸບຜົນການຄົ້ນຄວ້າ

ໃນການສຶກສາຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ. ຈາກຜົນການວິເຄາະຂໍ້ມູນສາມາດສະຫຼຸບໄດ້ດັ່ງນີ້:

1) ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ

ຜູ້ຕອບແບບສອບຖາມສ່ວນຫຼາຍເປັນຜູ້ຊາຍ 182 ຄົນ ເທົ່າກັບ 56 %, ແລະ ແມ່ຍິງ 143 ຄົນເທົ່າກັບ 44%, ດ້ານວຸດທິການສຶກສາ ຊັ້ນຕົ້ນ 0; ຊັ້ນກາງ 154 ຄົນ ເທົ່າກັບ 47.4; ຊັ້ນສູງ 156 ຄົນ ເທົ່າກັບ 50.8 %; ປະລິນຍາຕີ 6 ຄົນ ເທົ່າກັບ 1.8 %; ດ້ານຕໍາແໜ່ງຜູ້ບໍລິຫານ 87 ຄົນ ເທົ່າກັບ 26.8 %, ແລະ ຄູສອນ 238 ຄົນ ເທົ່າກັບ 73.2 %.

2) ຜົນການວິເຄາະ ສະພາບການບໍລິຫານວິຊາການຂອງໂຮງຮຽນປະຖົມສຶກສາ ໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງສາລະວັນ.

ການບໍລິຫານວິຊາການຂອງໂຮງຮຽນປະຖົມສຶກສາໃນກຸ່ມໂຮງຮຽນປະຖົມສຶກສາ ແຂວງສາລະວັນ ໂດຍພາບລວມແລ້ວແມ່ນຢູ່ໃລະດັບດີ. ດ້ານທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນດ້ານການວັດ - ປະເມີນຜົນ, ຮອງລົງມາແມ່ນດ້ານການຫຼັກສູດ, ຮອງລົງມາແມ່ນດ້ານການຈັດການຮຽນ - ການສອນ ແລະ ດ້ານການນິເທດພາຍໃນ, ດ້ານທີ່ມີຄ່າສະເລ່ຍຕໍ່າກວ່າໝູ່ແມ່ນດ້ານສື່ການຮຽນ - ການສອນ.

1. ການບໍລິຫານຫຼັກສູດ: ໂດຍລວມແມ່ນຢູ່ໃນລະດັບດີເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຄ່າສະເລ່ຍທີ່ສູງກວ່າໝູ່ແມ່ນຂໍ້ 4ໃຫ້ຊຸມຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາຫຼັກສູດ ແລະ ນໍາໃຊ້ຫຼັກສູດ, ຮອງລົງມາແມ່ນຂໍ້ 1 ແມ່ນມີການປະຕິບັດຫຼັກສູດຕາມນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາ ກໍານົດໄວ້ ແລະ ຂໍ້ທີ 8 ສໍາມະນາເພື່ອປັບປຸງຫຼັກສູດມີຄ່າສະເລ່ຍໜ້ອຍກວ່າໝູ່.

2. ດ້ານການບໍລິຫານການຈັດການຮຽນ - ການສອນ: ໂດບພາບລວມແມ່ນຢູ່ໃນລະດັບດີ ແຕ່ພິຈາລະນາໃນແຕ່ລະຂໍ້ເຫັນວ່າຂໍ້ທີ່ມີຄ່າສະເລ່ຍສູງແມ່ນຂໍ້ທີ 4 ມີການຈັດຄູສອນແທນໃນກໍລະນີຄູປະຈໍາຫ້ອງຂາດໄດ້ຢ່າງເໝາະສົມ ແລະ ທັນການ, ຮອງລົງມາແມ່ນຂໍ້ 6 ມີການຈັດປະຊຸມສໍາມະນາເພື່ອປັບປຸງແກ້ໄຂການຈັດການຮຽນ - ການສອນ ແລະ ຂໍ້ທີ 5 ຄູມີເຕັກນິກ ແລະ ວິທີການສອນແບບໃໝ່ຢ່າງຫຼາກຫຼາຍມີຄ່າສະເລ່ຍໜ້ອຍກວ່າໝູ່.

3. ດ້ານການບໍລິຫານສື່ການຮຽນ - ການສອນ: ໂດຍພາບລວມຢູ່ໃນລະດັບດີ, ແຕ່ພິຈາລະນາໃນແຕ່ລະຂໍ້ເຫັນວ່າເຫັນວ່າຂໍ້ທີ່ມີຄ່າສະເລ່ຍສູງແມ່ນຂໍ້ທີ 5 ມີຫ້ອງສະໝຸດທີ່ສາມາດຕອບສະໜອງປຶ້ມຕໍາລາ ແລະ ເອກະສານຄົບຖ້ວນຕາມລາຍວິຊາຮຽນ; ຮອງລົງມາແມ່ນຂໍ້ທີ 7 ແມ່ນມີການຕິດຕາມ ແລະ ປະເມີນຜົນການນໍາໃຊ້ສື່ການຮຽນ - ການສອນ; ແລະ ຂໍ້ທີ 4 ມີການນໍາໃຊ້ສື່ທີ່ທັນສະໄໝເຂົ້າໃນການຮຽນ - ການສອນມີຄ່າສະເລ່ຍຕໍ່າກວ່າໝູ່.

4. ດ້ານການບໍລິຫານການວັດ - ປະເມີນຜົນ: ໂດຍພາບລວມໃນລະດັບດີ ແຕ່ພິຈາລະນາໃນແຕ່ລະຂໍ້ເຫັນວ່າ ຂໍ້ທີ່ 8 ມີການແຈ້ງຜົນການສອບເສັງທຸກຄັ້ງໃຫ້ນັກຮຽນຮູ້ມີຄ່າສະເລ່ຍສູງກວ່າໝູ່ ແລະ ຮອງລົງມາແມ່ນຂໍ້ 5 ແມ່ນມີການພັດທະນາເຄື່ອງມືວັດ ແລະ ປະເມີນຜົນເພື່ອຕອບສະໜອງຜົນການຮຽນຮູ້ ແລະ ຂໍ້ທີ 6 ນໍາຜົນທີ່ໄດ້ຈາກການວັດ - ປະເມີນນໍາໃຊ້ໃນການປັບປຸງການຮຽນ - ການສອນມີຄ່າສະເລ່ຍຕໍ່າກວ່າໝູ່.

5. ດ້ານການບໍລິຫານການນິເທດພາຍໃນ: ໂດຍພາບລວມແມ່ນຢູ່ໃນລະດັບດີ. ແຕ່ພິຈາລະນາໃນແຕ່ລະຂໍ້ເຫັນວ່າຂໍ້ທີ 3 ໂຮງຮຽນຈັດໃຫ້ຄູມີສ່ວນຮ່ວມໃນການນິເທດມີຄ່າສະເລ່ຍສູງກວ່າໝູ່; ຮອງລົງມາຂໍທີ 7 ມີການບັນທຶກຂໍ້ມູນນິເທດ ແລະ ຖອດຖອນບົດຮຽນໃນການນິເທດທຸກຄັ້ງ ແລະ ຂໍ້ທີ 6 ມີການດໍາເນີນນິເທດໃນຫຼາຍຮູບແບບ ແລະ ເໝາະສົມກັບໂຮງຮຽນມີຄ່າສະເລ່ຍຕໍ່າກວ່າໝູ່.

3) ຜົນການປຽບທຽບຄວາມຄິດເຫັນກ່ຽວກັບການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນໂດຍຈໍາແນກຕາມເພດ , ຕໍາແໜ່ງ ແລະ ວຸດທິການສຶກສາ.

1. ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຜູ້ບໍລິຫານທີ່ມີເພດຕ່າງກັນໂດຍພາບລວມເຫັນວ່າບໍ່ແຕກຕ່າງກັນ. ມີພຽງດ້ານການຮຽນ - ການສອນ ແລະ ດ້ານການວັດ ແລະ ປະເມີນມີຄວາມຄິດເຫັນແຕກຕ່າງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ສະຫຼຸບວ່າ ຜົນການວິເຄາະຂໍ້ມູນບໍ່ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ວ່າ ຜູ້ບໍລິ ຫານ ແລະ ຄູສອນທີ່ມີເພດຕ່າງກັນມີຄວາມຄິດເຫັນແຕກຕ່າງກັນຢ່າງມີໃນຍະສໍາຄັນທາງສະຖິຕິ 0.05.

2. ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນທີ່ມີຕໍາແໜ່ງໜ້າທີ່ຕ່າງກັນກ່ຽວ

ກັບການຈັດຕັ້ງປະຕິບັດການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງສາລະວັນ, ໂດຍພາບລວມ ແລະ ແຕ່ລະດ້ານເຫັນວ່າບໍ່ແຕກຕ່າງກັນ. ມີພຽງດ້ານສື່ການຮຽນ - ການສອນເທົ່ານັ້ນ ຜູ້ບໍລິຫານ ແລະ ຄູສອນທີ່ມີຄວາມຄິດເຫັນແຕກຕ່າງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ສະຫຼຸບວ່າ ຜົນການວິເຄາະຂໍ້ມູນບໍ່ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ວ່າ ຜູ້ບໍລິຫານ ແລະ ຄູສອນທີ່ມີຕໍາແໜ່ງໜ້າທີ່ຕ່າງກັນມີຄວາມຄິດເຫັນແຕກຕ່າງກັນຢ່າງມີໃນຍະສໍາຄັນທາງສະຖິຕິ .05.

3. ປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນກ່ຽວກັບການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ ແລະ ແຕ່ລະດ້ານເຫັນວ່າແຕກຕ່າງກັນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ມີພຽງດ້ານວັດ ແລະ ປະເມີນຜົນ ແລະ ດ້ານການນິເທດພາຍໃນມີຄວາມຄິດເຫັນບໍ່ແຕກຕ່າງ. ສະຫຼຸບວ່າ ຜົນການວິເຄາະຂໍ້ມູນສອດຄອງກັບສົມມຸດຖານທີ່ຕັ້ງໄວ້ວ່າ ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາແຕກຕ່າງກັນມີຄວາມຄິດເຫັນຕ່າງກັນຢ່າງມີໃນຍະສໍາຄັນທາງສະຖິຕິ 0.05 ດັ່ງນັ້ນ, ຈຶ່ງມີການທົດສອບລາຍຄູ່ດັ່ງລຸ່ມນີ້:

- ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນຕໍ່ການບໍລິຫານວິຊາການບໍ່ແຕກຕ່າງໃນດ້ານຫຼັກສູດ.

ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດ ຕໍ່ການບໍລິຫານວຽກງານວິຊາການແຕກຕ່າງກັນຢ່າງມີລະດັບຄວາມສໍາຄັນທາງສະຖິຕິ 0.05 ມີຈໍານວນ 1 ຄູ່ໄດ້ແກ່: ຜູ້ບໍລິຫານ ແລະ ຄູສອນວຸດທິການສຶກສາຊັ້ນສູງໃນດ້ານການຮຽນ - ການສອນຫຼາຍກວ່າຜູ້ບໍລິຫານ ແລະ ຄູສອນວຸດທິການສຶກສາຊັ້ນກາງ.

- ຜູ້ບໍລິຫານ ແລະ ຄູສອນທີ່ມີວຸດທິການສຶກສາຕ່າງກັນມຄວາມຄິດເຫັນຕໍ່ການບໍລິຫານວຽກງານວິຊາການແຕກຕ່າງກັນຢ່າງມີລະດັບຄວາມສໍາຄັນທາງສະຖິຕິ 0.05 ມີຈໍານວນ 2 ຄູໄດ້ແກ່: ຜູ້ບໍລິຫານ ແລະ ຄູສອນວຸດທິການສຶກສາຊັ້ນກາງ ກັບປະລິນຍາຕຣີ ແລະ ຜູ້ບໍລິຫານ ແລະ ຄູສອນວຸດທິການສຶກສາຊັ້ນສູງ ກັບ ປະລິນຍາໃນດ້ານສື່ການຮຽນ - ການສອນ.

- ຜູ້ບໍລິການ ແລະ ຄູສອນທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນຕໍ່ການບໍລິຫານວິຊາການແຕກຕ່າງກັນຢ່າງມີລະດັບຄວາມສໍາຄັນທາງສະຖິຕິ 0.05 ມີຈໍານວນ 2 ຄູໄດ້ແກ່: ຜູ້ບໍລິຫານ ແລະ ຄູສອນວຸດທິການສຶກສາຊັ້ນກາງໃນການດ້ານວັດ - ປະເມີນຜົນນ້ອຍກວ່າ ຜູ້ບໍລິຫານ ແລະ ຄູສອນວຸດທິການສຶກສາ ປະລິນຍາຕຣີ ແລະ ຜູ້ບໍລິຫານ ແລະ ຄູສອນວຸດທິການສຶກສາຊັ້ນສູງ ກັບ ປະລິນຍາ ໃນດ້ານການວັດ - ປະເມີນຜົນ.

- ຜູ້ບໍລິຫານ ແລະ ຄູສອນຈໍາແນກແຕ່ລະຄູ່ພົບວ່າ ຜູ້ບໍລິຫານ ແລະ ຄູສອນທທີ່ມີວຸດທິການສຶກສາຕ່າງກັນມີຄວາມຄິດເຫັນຕໍ່ການບໍລິຫານວິຊາການບໍ່ແຕກຕ່າງໃນດ້ານການນິເທດພາຍໃນ.

4) ຜົນການສັງລວມຄວາມຄິດເຫັນແນວທາງການບໍລິຫານວິຊາການໃນກຸ່ມໂຮງຮຽນປະຖົມສຶກສາແຂວງ ສາລະວັນ

1. ດ້ານການບໍລິຫານຫຼັກສູດ: ຕ້ອງມີການປັບປຸງຫຼັກສູດໃຫ້ມີຄວາມເໝາະສົມກັບອາຍຸຂອງນັກຮຽນ, ປັບປຸງເນື້ອໃນບາງວິຊາ, ໂຮງຮຽນຕ້ອງມີການນິເທດຫຼັກສູດກ່ອນການສ້າງໂຄງການສອນເພື່ອຈະໄດ້ຮຽບຮຽງຫຼືວບົດໃຫ້ເປັນໄປຕາມໄປລະບົບຄວາມຮັບຮູ້ຂອງຜູ້ຮຽນ, ພັດທະນາຫຼັກສູດໃຫ້ທັນກັບຍຸກສະໄໝ ແລະ ໃຫ້ທັນກັບການນໍາໃຊ້ເທັກໂນໂລຢີຍຸກໃໝ່.
2. ດ້ານການບໍລິຫານດ້ານການຮຽນ - ການສອນ: ຕ້ອງຈັດກິດການຮຽນ - ການສອນໃຫ້ແທດ ເໝາະກັບນັກຮຽນ, ເໝາະກັບລະດັບຄວາມຮູ້ຄວາມສາມາດ, ອາຍຸ ແລະ ລະດັບສະຕິປັນຍາຂອງນັກຮຽນໂດຍການນໍາໃຊ້ວິທີສິດສອນທີ່ຫຼາກຫຼາຍຮູບແບບ.
3. ການບໍລິຫານສື່ການຮຽນ - ການສອນ: ມີແນວທາງໃນການສົ່ງເສີມໃຫ້ຄູໄດ້ຜະລິດສື່ການຮຽນ - ການ

ສອນການນຳໃຊ້ສື່ ຫຼື ສະແດງສື່ໃຫ້ເໝາະສົມ ແລະ ມີສ່ວນຮ່ວມຂອງນັກຮຽນໃນການສ້າງສື່ການຮຽນ - ການສອນໃຫ້ຫຼາຍເພື່ອໃຫ້ເດັກໄດ້ພັດທະນາທັກສະ ທັງເຂົ້າໃຈຕໍ່ກັບສື່, ມີການນຳໃຊ້ສື່ທີ່ຫາໄດ້ໃນທ້ອງຖິ່ນເພື່ອປະກອບເຂົ້າໃນການຮຽນ - ການສອນໃຫ້ຫຼາຍຂຶ້ນ.

4. ດ້ານການບໍລິຫານດ້ານວັດ - ປະເມີນຜົນການຮຽນ: ມີແນວທາງສົ່ງເສີມໃຫ້ຄູໄດ້ອົບຮົມວິທີການວັດ - ປະເມີນຜົນຖືກຕ້ອງ, ໃຫ້ມີການປະເມີນກ່ອນການຮຽນ, ລະຫວ່າງຮຽນ, ຫຼັງການຮຽນ ແລະ ການປະເມີນຕ້ອງມີລະດັບຄວາມຍາກ - ງ່າຍຂອງກິດຈະກຳເພື່ອຊຸກຍູ້ໃຫ້ນັກຮຽນຄົ້ນຄວ້າບົດຮຽນໃຫ້ຫຼາຍຂຶ້ນ.
5. ດ້ານການບໍລິຫານການນິເທດພາຍໃນ: ຕ້ອງມີການສ້າງຄູນິເທດປະຈຳໂຮງຮຽນ ແລະ ຕ້ອງໄດ້ຮັບການ

ເຝິກອົບຮົມວິທີການສອນທີ່ຫຼາກຫຼາຍເພື່ອມາເຜີຍແຜ່ໃຫ້ຄູໃນໂຮງຮຽນຕົນຮັບຮູ້ ແລະ ວິຊາການຂອງໂຮງຮຽນຕ້ອງມີການຈັດນິເທດໃນໂຮງຮຽນຕົນຢ່າງໜ້ອຍປີລະສອງຄັ້ງ.

**6. ຄວາມຮູ້ບຸນຄຸນ**

ວິທະຍານິພົນສະບັບນີ້ສຳເລັດລຸລ່ວງດ້ວຍດີເພາະຜູ້ຄົ້ນຄວ້າໄດ້ຮັບຄວາມຊ່ວຍເຫຼືອແນະນຳໃຫ້ຄຳປຶກສາ ເປັນຢ່າງດີຈາກທ່ານ ປອ ນວນເພັດ ຄຳພູນວົງ ທີ່ປຶກສາວິທະຍານິພົນ, ທ່ານ ປທ ສອນເພັດ ສີສຸລາດ, ທ່ານ ປທ ສົມພຽນ ມະຫາພົມ ຜູ້ຊ່ວຍທີ່ປຶກສາວິທະຍານິພົນ. ຜູ້ຄົ້ນຄວ້າຮູ້ສຶກຊາບຊຶ້ງໃນບຸນຄຸນຂອງທ່ານເປັນຢ່າງຍິ່ງທີ່ໄດ້ເອົາ ໃຈໃສ່ຊ່ວຍເຫຼືອຢ່າງໃກ້ຊິດ ແລະ ໃຫ້ການແນະນຳຢ່າງບໍ່ຮູ້ເມື່ອຍ, ຜູ້ຄົ້ນຄວ້າຂໍສະແດງຄວາມຂອບໃຈຢ່າງສູງ ມາຍັງໂອກາດນີ້ດ້ວຍ.

ຜູ້ຄົ້ນຄວ້າຂໍຂອບໃຈຢ່າງສູງມາຍັງບັນດາທ່ານອາຈານຜູ້ໃຫ້ຄວາມຮູ້ ແລະ ແນະນຳດ້ານວິຊາການລວມທັງ ການເຮັດບົດວິທະຍານິພົນ, ຂໍຂອບໃຈເປັນຢ່າງສູງມາຍັງທ່ານຜູ້ຊ່ຽວຊານທັງ 3 ທ່ານຄື: ທ່ານ ຊອ ປອ ໂພທອງ ພົງ ສີງຄາມ, ທ່ານ ອຈ ປອ ນ ສຸລິພອນ ສີວິໄຊ ແລະ ທ່ານ ປອ ສຸພັນ ເທບພະວົງສາ ທີ່ກວດແກ້ແບບສອບຖາມໃນ ການຄົ້ນຄວ້າຈົນສຳເລັດໄປດ້ວຍດີ.

ຂໍຂອບໃຈມາຍັງຄະນະຜູ້ບໍລິຫານ ແລະ ຄະນະຮັບຜິດຊອບຂອງຄະນະສຶກສາສາດ ມະຫາວິທະຍາໄລຈຳປາ ສັກທີ່ໄດ້ຊີ້ນຳ, ອຳນວຍຄວາມສະດວກ ໃນການຄົ້ນຄວ້າຮ່ຳຮຽນ ແລະ ເອົາໃຈໃສ່ຊ່ວຍເຫຼືອໃນການເຮັດບົດວິທະຍານິພົນຂອງຂ້າພະເຈົ້າຈົນສຳເລັດຜົນ.

ຂໍຂອບໃຈນຳຜູ້ບໍລິຫານຫ້ອງການສຶກສາທິການ ແລະ ກິລາເມືອງ ສາລະວັນ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ວາປີ ທີ່ອຳນວຍຄວາມສະດວກ ໃຫ້ຂ້າພະເຈົ້າໃນການລົງເກັບກຳ ແລະ ສະໜອງຂໍ້ມູນຢູ່ໃນໂຮງຮຽນປະຖົມສຶກສາພາຍໃນເມືອງຂອງທ່ານ, ຂອບໃຈມາຍັງທ່ານຜູ້ບໍລິຫານ ແລະ ຄູສອນທີ່ຊ່ວຍສະໜອງຂໍ້ມູນ ໃສ່ໃນແບບສອບຖາມໃນຄັ້ງນີ້ເປັນຢ່າງດີ.

ພິເສດຂໍຂອບໃຈມາຍັງຄອບຄົວ ສາມີ, ພໍ່ແມ່, ອ້າຍເອື້ອຍນ້ອງ ທີ່ສະໜັບສະໜູນທຶນໃນການສຶກສາຕະຫຼອດ ມາ ແລະ ຂໍຂອບໃຈມາຍັງໝູ່ເພື່ອນທຸກຄົນທີ່ຮຽນຮ່ວມຫ້ອງດຽວກັນທີ່ເປັນກຳລັງໃຈ, ຊ່ວຍເຫຼືອໃນການຮ່ຳຮຽນ ແລະ ເຮັດບົດວິທະຍານິພົນຈົນສຳເລັດຜົນ.

ສຸດທ້າຍນີ້ຂໍໄຫວ້ວອນເອົາສິ່ງສັກສິດທັງຫຼາຍຈົ່ງດົນບັນດານໃຫ້ພວກທ່ານເຫຼົ່ານີ້ຈົ່ງມີແຕ່ຄວາມຜາສຸກ, ສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ມີຄວາມສຸກຈະເລີນໃນຊີວິດຄອບຄົວຂອງທ່ານ ຕະຫຼອດໄປເທີດ.

**7. ເອກະສານອ້າງອີງ**

*ການບໍລິຫານວິຊາການຂອງຜູ້ບໍລິຫານສະຖານການສຶກສາໃນໂຮງຮຽນມັດທະຍົມສຶກສາ ສັງກັດສຳນັກງານເຂດການສຶກສາສຳນັກງານຂດ 24* . (2019: 76). ຈັງຫວັດສາລະຄາມ ມະຫາວິທະຍາໄລຣາດຊະພັດມະຫາສາຣະຄາມ.

*ການບໍລິຫານວິຊຊາການຂອງໂຮງຮຽນສັງກັດສຳນັກ*

*ເຂດພື້ນທີ່ການສຶກສາມັດທະຍົມຕອນປາຍບິນທະບູລີ.* (2020: 142).

ກະຊວງສຶກສາທິການ ແລະ ກິລາ . (2011). *4 ບຸກທະລຸຂອງຂະແໜງການສຶກສາ.* ນະຄອນຫຼວງວຽງຈັນ: ສຶກສາໃໝ່.

ກະຊວງສຶກສາທິການ ແລະ ກິລາ. (2016 -2020). *ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ5ປີຄັ້ງທີ VIII .*

ກະຊວງຍຸດຕິທຳ. (2003 : 8). *ລັດຖະທຳມະນູນ.* ນະຄອນຫຼວງຈັນ: ກະຊວງຍຸດຕິທຳ.

ຈາຣຸນ ເກົ້າອ້ຽນ. (2014:5-6). *ເທັກນິກການບໍລິຫານວິຊາການດ້ານການສຶກສາ.* ຈັງຫວັດຍະລາ: ສຳນັກພິມມະຫາວິທະຍາໄລ ຍະລາ.

ຈິໜັ້ນຍາພິນ ໂຄດຫຼັກຄຳ. (2015: 55). *ແນວທາງການບໍລິຫານວິຊາການຂອງໂຮງຮຽນມັດທະຍົມສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາເຂດ 19.* ຈັງຫວັດມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ສຸກກົງແສງ ໄຊຍະເລີດ. (2008: 3). ສູນທອນ ວິໄລສັກ. (2019: 40). *ການບໍລິຫານງານວິຊາການຂອງຜູ້ບໍລິຫານປະຈຳຕຳບົນສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາສະຕູ.* ກຸງເທບມະຫານະຄອນ: ປະສານການພິມ.

ສົມບູນ ສີລິສິງຄາມ. (2018 : 72). *ການບໍລິຫານວິຊາການຂອງໂຮງຮຽນປະຖົມສຶກສາ ເມືອງ ສາລະວັນ ແຂວງ ສາລະວັນ.* ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ ມະຫາວິທະຍາໄງແຫ່ງຊາດ.

ບົດສະຫຼຸບຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ ສາລະວັນ ແລະ ເມືອງ ວາປີແຂວງ ສາລະວັນ. (2022).

ພຸດທະສອນ ພິມມະວິ. (2015 :42). *ການບໍລິຫານວຽກງານວິຊາການໂຮງຮຽນມັດທະຍົມ ເມືອງ ແປກ ແຂວງ ຊຽງຂວາງ.* ນະຄອນຫຼວງວຽງຈຜນ: ຄະນະສຶກສາສາດ ມະຫາໄລແຫ່ງຊາດ.

ອິນທິຍາ ອິນທິບ. (2016: ບັດຄັດຫຍໍ້). *ການສຶກສາສະພາບ ແລະ ບັນຫາການບໍລິຫານວຽກງານວິຊາການຂອງສະຖານການສຶກສາທີ່ມີນັກຮຽນຕ່າງດ້າວສະສຳນັກງານເຂດພື້ນທີ່ການການສຶກສາປະຖົມ.* ພະນະຄອນສີອາຍຸດທະຍາ.

ໂນນສະຫວ່າງ ມັງໜໍ່ເມກ. (2020: 50). *ສະພາບການບໍລິຫານວຽງວິຊາການຂອງໂຮງຮຽນມັດທະຍົມສົມບູນພາຍໃນເມືອງໜື່ນ ແຂວງວຽງຈັນ.* ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ ມະຫາວິທະຍາໄງແຫ່ງຊາດ.

ໄຊຍະ ຊວນປະກອບ. (2007:46). *ການບໍລິຫານງານວິຊາການສະສຶກສາຂັ້ນພື້ນຖານ.* ສົງຂາ: ມະຫາວິທະຍາໄລທັກສິນ.